# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 18 ກຸມພາ 2007 ( 02- 18 -2007 )

---

## พระบุดกำเพือนพระบิดา:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 5:17-23, 36-42, 46-47

**ຄວາມຈິງໃນພຣະຄັມພີ:** ຄົນທັງຫລາຍທີ່ໄດ້ເຊື່ອຢ່າງແທ້ຈິງໃນພຣະເຈົ້ານັ້ນຈະຕ້ອງໄດ້ເຊື່ອໃນພຣະບຸດພຣະເຢຊູ ຄຣິດເໝືອນກັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍທ່ານໃຫ້ຮັບວ່າພຣະຄຣິດເປັນສູນກາງຂອງຄວາມເຊື່ອຄຣິສຕຽນ ໂດຍ...

- ຢືນຢັນວ່າຖ້າຄົນໃດຫາກນະມັສການພຣະເຈົ້າຢ່າງແທ້ຈິງ ຄົນ ໆ ນັ້ນຈະໄດ້ເຊື່ອໃນພຣະເຢຊູຊຶ່ງເປັນພຣະ ພຣະບຸດຂອງພຣະເຈົ້າ ແລະ...
- ຕັດສິນໃຈຈະໃຫ້ກຽດພຣະເຈົ້າພຣະບິດາດ້ວຍການນະມັສການ ແລະຟັງຄວາມພຣະເຢຊູຊຶ່ງເປັນພຣະບຸດ ຂອງພຣະອົງ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້.
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### <u>ບົດນຳ:</u>

1. ອ່ານຫົວຂໍ້ບົດຮຽນໃນມື້ນີ້ " ພຣະບິດາຄືພຣະບຸດ, ພຣະບຸດຄືພຣະບິດາ " ແນໃສ່ບົດຮຽນນີ້ໃຫ້ມີຄວາມເຂົ້າໃຈ ແລະປະສົບການຣະຫວ່າງ " ພຣະເຈົ້າ ກັບ ພຣະເຢຊູ ".
2. ໃຫ້ນັກຮຽນສົນໃຈສະພາບໂລກຂອງພຣະເຈົ້າໃນພຣະຄັມພີເດີມ ( ຄວາມໂຫດຮ້າຍ, ຮຸນແຮງ, ການຂ້າຄົນ ທີ່ ທີ່ສະແດງອອກ) ວ່າມັນແຕກຕ່າງກັບສະພາບການໂລກໃນສມັຍຂອງພຣະເຢຊູໃນພຣະຄັມພີໃໝ່ນັ້ນຄື (ຄວາມຮັກ ຄວາມດີ, ຄວາມສຸພາບ, ການຍອມຮັບ ແລະ ການສະແດງອອກ ) ສົນທະນາກັນຈັກນ່ອຍເພື່ອໃຫ້ໄດ້ໃຈຄວາມ

ວ່າພາບເຫລົ່ານັ້ນໄດ້ຊີ້ໃຫ້ເຮົາເຫັນຣະຫວ່າງພຣະເຈົ້າພຣະບິດາ ແລະພຣະເຢຊູໄດ້ແນວໃດ?

3) ໃນຖານະພວກເຮົາເປັນຄຣິສຕຽນ ບໍ່ຄວນໄວ້ວາງໃຈໃນສິ່ງທີ່ເຫັນກັບຕາໃນໂລກ ຫລືຄົນທີ່ໃຫ້ເຫດຜົນທີ່ຜິດກັບສິ່ງທີ່ເຮົາເຊື່ອ.

4) ແນະນໍານັກຮຽນໃຫ້ໃຊ້ພຣະຄັມພີຊອກຫາຄວາມຈິງເຣື່ອງການສັມພັນລະຫວ່າງພຣະເຈົ້າກັບພຣະເຢຊູ.

## 1. <u>ພຣະບິດາ ແລະພຣະບຸດຈະບໍ່ແຍກອອກຈາກກັນໄດ້:</u> (ໂຢຮັນ 5:17-23)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 5:17-23

2) ຂໍ້ຄິດຂອງສິ່ງທີ່ແຍກຈາກກັນໄດ້ເຊັ່ນຕົວຢ່າງ (ໄຂ່, ເສື້ອຜ້າທີ່ຕ້ອງຊັກ, ນໍ້າມັນ ແລະນໍ້າ)

3) ໃຫ້ຄິດເບິ່ງສິ່ງຂອງທີ່ບໍ່ສາມາດແຍກອອກຈາກກັນໄດ້ ຕົວຢ່າງ (ມີຂອງເປັນນໍ້າສອງຢ່າງທີ່ແຕກຕ່າງກັນຄື ນໍ້າ ແລະແຟັບທີ່ເອົາມາສົມກັນແລ້ວເຮົາຈະແຍກແຟັບກັບນໍ້ານັ້ນອອກຈາກກັນບໍ່ໄດ້.)

4) ສໍາລັບກ້ອນຫີນ ແລະນໍ້າທີ່ເອົາມາໃສ່ໃນຂວດດຽວກັນນັ້ນເຮົາຍັງສາມາດແຍກມັນອອກຈາກກັນໄດ້ຢູ່.

5) ມີນໍ້າໂຄລາສອງຂວດແຕ່ຕ່າງຍີ່ຫໍ້ມາປະສົມກັນເຮົາກໍຈະບໍ່ສາມາດແຍກອອກຈາກກັນໄດ້ນີ້ເລັງເຖິງພຣະເຈົ້າແລະພຣະເຢຊູຊຶ່ງເປັນອັນດຽວກັນແຕ່ຕ່າງຊື່ ແລະຈະບໍ່ສາມາດແຍກຈາກກັນໄດ້ ແລະໄດ້ຊີ້ໃຫ້ເຫັນວ່າພຣະບິດາ ແລະພຣະບຸດນັ້ນແຍກຈາກກັນບໍ່ໄດ້ຖ້າບຸກຄົນໃດເຊື່ອໃນພຣະເຈົ້າພຣະບິດາແທ້ຈິງເຂົາເຈົ້າກໍຈະເຊື່ອໃນພຣະເຢຊູວ່າເປັນພຣະບຸດຂອງພຣະອົງ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນ:** ໂຢຮັນ 5:17-23

1) ມີທາງໃດແດ່ທີ່ພຣະບຸດເປັນຄືພຣະບິດາ?

2) ມີທາງໃດທີ່ທ່ານຢາກເປັນຄືພຣະບິດາຜູ້ຊົງສະຖິດໃນສວັນ?

3) ໃນພຣະທັມຕອນນີ້ໄດ້ຊີ້ໃຫ້ທ່ານຮູ້ວ່າ ພຣະເຈົ້າ ແລະພຣະເຢຊູແຍກຈາກກັນບໍ່ໄດ້ດ້ວຍວິທີໃດ?

4) ຖ້າຈະໂຄຣົບຢໍາເກງ ນັບຖືແຕ່ພຣະບິດາຜູ້ດຽວໄດ້ບໍ່?

5) ທ່ານຈະອະທິບາຍໃຫ້ຄົນອື່ນວ່າພຣະບິດາ ແລະພຣະບຸດນັ້ນແຍກຈາກກັນບໍ່ໄດ້ເພາະເຫດໃດ?

## 2. <u>ພຣະບຸດໄດ້ທໍາງານຂອງພຣະບິດາ:</u> (ໂຢຮັນ 5:36-38)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 5:36-38

2) ອະທິບາຍໃຫ້ນັກຮຽນເຂົ້າໃຈກ່ຽວກັບງານຂອງພຣະບິດາທີ່ຊົງສັ່ງພຣະເຢຊູຄຣິດມາກະທໍານັ້ນ ແລະຂຽນຄໍາເຫັນຂອງເຂົາເຈົ້າໄວ້ໃນກະດານ. ແລ້ວມາສົນທະນາເພື່ອໃຫ້ເຫັນວ່າພຣະເຢຊູຊົງທໍາງານຂອງພຣະເຈົ້າເພື່ອໃຫ້ຄົນທັງຫລາຍໄດ້ເຊື່ອວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າ.

3) ການທີ່ພຣະເຢຊູຊົງທໍາງານຂອງພຣະບິດາ ເພື່ອຊ່ອຍຜູ້ທີ່ເຊື່ອຮູ້ວ່າພຣະເຢຊູຊົງເປັນພຣະເຈົ້າສະເດັດມາໃນເນື້ອໜັງແທ້ຈິງ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ: ໂຢຮັນ 5:36-38**

1. ຜູ້ທີ່ເຫັນພຣະເຢຊູເຮັດການອັສຈັນແລ້ວບໍ່ເຊື່ອພຣະອົງນັ້ນທ່ານຄິດວ່າແນວໃດ?
2. ທ່ານຄິດວ່າຖ້າຫາກເຂົາໄດ້ຍິນສຽງພຣະເຢຊູມາຈາກສວັນແລ້ວເຂົາຈະເຊື່ອບໍ່? ເປັນເພາະເຫດໃດເຂົາຈຶ່ງເຊື່ອ ແລະເປັນເພາະເຫດໃດເຂົາຈຶ່ງບໍ່ເຊື່ອ?
3. ທ່ານສາມາດອະທິບາຍໃຫ້ຄົນອື່ນຮູ້ໄດ້ບໍ່ວ່າ ພຣະເຢຊູທໍາງານຂອງພຣະບິດາ?

**3. <u>ພຣະທັມຂອງພຣະເຈົ້າແມ່ນເຣື່ອງພຣະບຸດຂອງພຣະອົງ:</u>** ( ໂຢຮັນ 5:39-42, 46-47)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຢຮັນ 5:39-42,46-47

2) **ອະທິບາຍ:** ການສຶກສາພຣະຄັມພີຂອງຄົນທົ່ວໂລກຈະບໍ່ມີປໂຍດ, ຖ້າບໍ່ໃຫ້ກຽດ ແລະບໍ່ຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ.

3) ທາງທີ່ພວກເຮົາຈະໃຫ້ຄົນອື່ນຮູ້ວ່າພຣະຄໍາຂອງພຣະເຈົ້າເປັນຄວາມຈິງ ແມ່ນໃນເຣື່ອງພຣະບຸດຂອງພຣະອົງ.

4) ມິດຊັນນາຣີທີ່ອອກໄປທົ່ວໂລກກໍມີປັນຫາທີ່ຫຍຸ້ງຍາກທີ່ຈະຊ່ອຍໃຫ້ຄົນທັງຫລາຍໄດ້ເຫັນໃນເຣື່ອງນີ້.

5) ຖ້າພວກເຮົາສາມາດໃຫ້ຄົນອື່ນເຂົ້າໃຈໃນເຣື່ອງຂອງພຣະເຢຊູຄຣິດຢ່າງລະອຽດແລ້ວເຂົາຈະຍອມຮັບພຣະເຢຊູຄຣິດໄດ້.

**ຖາມ:** 1) ເປັນການຖືກຕ້ອງບໍທີ່ມີຄົນເຊື່ອໃນພຣະຄັມພີ ແຕ່ບໍ່ເຊື່ອໃນພຣະເຢຊູຄຣິດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໂຢຮັນ 5:39-42,46-47

1. ເປັນຫຍັງຈຶ່ງວ່າການຮຽນພຣະຄັມພີໄຮ້ປໂຍດ ຖ້າບໍ່ໄດ້ນໍາຄົນໃດເຂົ້າມາຫາພຣະເຢຊູຄຣິດ?
2. ໃນພຣະຄໍາເຫລົ່ານີ້ ພຣະເຢຊູໄດ້ສອນເຖິງເຣື່ອງໃດ?
3. ທ່ານຈະຕອບສນອງແນວໃດ ຕໍ່ຜູ້ທີ່ເຊື່ອແຕ່ພຣະຄັມພີ ແຕ່ບໍ່ເຊື່ອໃນພຣະເຢຊູຄຣິດ?
4. ຖ້າພຣະຄໍາຂອງພຣະເຈົ້າກໍເປັນຂອງພຣະບຸດຂອງພຣະອົງ ພວກເຮົາສົມຄວນສຶກສາຢ່າງໃດ?
5. ການຂຍັນໝັ່ນພຽນຮຽນພຣະຄໍາຂອງພຣະເຈົ້າຂອງທ່ານນັ້ນ ມີຄວາມສັມພັນກ່ຽວພັນກັບຊີວິດຂອງທ່ານຢ່າງໃດ? ຄືກັບຫຍັງເຊັ່ນ: ເສັ້ນທີ່ຊື່ຕົງບໍ? ຈຸດສູງສຸດໃນຊີວິດບໍ? ເພື່ອຄວາມໝັ້ນຄົງແນ່ນອນໃຈໃນຊີວິດບໍ?

<u>ສລຸບ</u>:

- ຄວາມສັມພັນຂອງພຣະເຢຊູກັບພຣະບິດານັ້ນແມ່ນພຣະອົງເທົ່າທຽມກັນກັບພຣະບິດາ ທັງສອງບໍ່ສາມາມາດຈະແຍກອອກຈາກກັນໄດ້
- ພຣະບິດາຊົງເປັນພະຍານຜ່ານໂຢຮັນ, ຜ່ານການອັສຈັນທີ່ພຣະເຢຊູຊົງກະທໍາ, ແລະຜ່ານທາງພຣະຄໍາຂອງພຣະອົງນັ້ນກໍຄືອົງພຣະເຢຊູຄຣິດ. ຜູ້ໃດກໍຕາມທີ່ປະຕິເສດການເປັນພະຍານຂອງພຣະບິດາກ່ຽວກັບອົງພຣະເຢຊູ ຜູ້ນັ້ນຈະບໍ່ໄດ້ຮັບຄວາມລອດພົ້ນ.
- ບໍ່ມີຜູ້ໃດທີ່ວ່າຮັກພຣະເຈົ້າ ແຕ່ປະຕິເສດພຣະເຢຊູ ວ່າບໍ່ແມ່ນພຣະບຸດຂອງພຣະເຈົ້າ
- ໂມເຊ ໄດ້ເປັນພະຍານເຖິງອົງພຣະເຢຊູ, ການເຊື່ອໃນພຣະເຢຊູແມ່ນການຍອມຮັບການເປັນພະຍານຂອງໂມເຊກ່ຽວກັບພຣະອົງ. ຖ້າປະຕິເສດພຣະເຢຊູ ກໍແມ່ນປະຕິເສດໂມເຊ ເໝືອນກັນ.

1. ຈົດຈໍາສິ່ງທີ່ສໍາຄັນໃນບົດຮຽນໃນມື້ນີ້ ແລະຈົດຈໍ່ຢູ່ໃນພຣະຄັມພີແຫ່ງຄວາມຈິງ.
2. ເຮັດລາຍການອະທິຖານສໍາລັບຕົນວ່າຈະອະທິຖານເພື່ອໃຜ, ເພື່ອຫຍັງ? ເພື່ອກັນລືມໃນເວລາເຮົາອະທິຖານ.
3. ນໍາເອົາພຣະຄໍາທີ່ໄດ້ຮຽນມາໃຊ້ໃນການດໍາເນີນຊີວິດປະຈໍາວັນ ແລະເຕີມໃຫ້ເຕັມພຣະຄໍາຂອງພຣະບຸດ.
4. ອະທິຖານທູນຂໍຕໍ່ພຣະເຈົ້າໃຫ້ເພີ້ມຄວາມເຂົ້າໃຈແລະຄວາມເຊື່ອ ໃນການປິດຫ້ອງຮຽນ.